

ຕົວຢ່າງເຊັ່ນ: ຖ້າເຈົ້າຄິດວ່າຮູບແບບພາສາຫຼັກຂອງເຈົ້າຄື "ພາບ" ແຕ່ຮູບແບບທີ່ຄູ່ແຕ່ງງານຂອງເຈົ້າມັກຄື "ສຽງ" ກໍອາດເປັນເວລາທີ່ເຈົ້າຮຽນຮູ້ວິທີແປຄຳເວົ້າຂອງເຈົ້າເປັນຮູບແບບພາສາທີ່ຄູ່ແຕ່ງງານຂອງເຈົ້າມັກ. ໃຫ້ເຈົ້າຮຽນຮູ້ຄວາມຄິດສອງພາສາ ໂດຍເບິ່ງຈາກຂະບວນການສາມຂັ້ນຕອນທີ່ສະໝອງຂອງເຈົ້າເຮັດວຽກເມື່ອເຈົ້າເລີ່ມພາສາຕ່າງປະເທດ.

1. ປະການທຳອິດ ເຈົ້າຄິດສິ່ງທີ່ເຈົ້າຈະເວົ້າເປັນພາສາຂອງເຈົ້າ.
2. ເຈົ້າເຮັດການແປໃນໃຈເປັນພາສາໃໝ່.
3. ສຸດທ້າຍເຈົ້າເວົ້າສິ່ງທີ່ແປອອກມາແລ້ວ.

ຍັງດີທີ່ວ່າການແປຈາກພາສາສຽງເປັນພາສາພາບນັ້ນງ່າຍກວ່າການຮຽນພາສາອັງກິດ ຫຼື ພາສາເຢຍລະມັນ ໃຫ້ຄ່ອງແຄ້ວຕົວຢ່າງວ່າ: "ຂ້ອຍໄດ້ຍິນວ່າເຈົ້າເວົ້າຫຍັງ" ກາຍເປັນ "ຂ້ອຍຮູ້ແລ້ວວ່າເຈົ້າເວົ້າກ່ຽວກັບຫຍັງ" ການເປັນຄົນສອງພາສາຈະຊ່ວຍໃຫ້ຊີວິດຄອບຄົວຂອງເຈົ້າເຂັ້ມແຂງລວມທັງຄວາມສຳພັນອື່ນໆດ້ວຍ.

ຂໍ້ຄິດແລະຄຳແນະນຳເຫຼົ່ານີ້ບາງຂໍ້ຕ້ອງມີການປ່ຽນທັກສະນະຄະຕິ ບາງຂໍ້ຕ້ອງຮຽນຮູ້ຂໍ້ເທດຈິງ ຫຼື ຂໍ້ມູນ ແລະ ບາງຂໍ້ຕ້ອງມີການຝຶກຝົນເພື່ອພັດທະນາທັກສະນະການສ້າງຊີວິດຄູ່ແຕ່ງງານໃຫ້ເຂັ້ມແຂງຢູ່ໃນສະພາບທີ່ດີ ແລະ ມີຄວາມສຸກນັ້ນຕ້ອງອາໄສຄວາມຕັ້ງໃຈທີ່ທຸ້ມເທ ແລະ ຄວາມເຕັມໃຈຈະຮ່ວມມືກັນຜົນໄດ້ຮັບນັ້ນຍິ່ງໃຫຍ່.







# ເສົາຄ້ຳແຫ່ງຄວາມຮັກ

## ຖາມ

ແມ່ນຫຍັງທີ່ເຮັດໃຫ້ຄົນເຮົາລືມຍາກແລະນອນບໍ່ຫຼັບ?

ແມ່ນຫຍັງທີ່ເຮັດໃຫ້ຫົວໃຈເຮົາເຕັ້ນແຮງແລະຖອນຫາຍໃຈພຽງແຕ່ເຫັນຫຼືແມ້ກະທັ້ງຄິດຮອດຄົນໜຶ່ງ?

ເຈົ້າເຄີຍຮູ້ສຶກຂາຍໜ້າທີ່ຕົນເອງໜ້າແດງແລະເວົ້າບໍ່ອອກເມື່ອພົບກັບ "ຄົນຄົນນັ້ນ" ບໍ?

ແມ່ນຫຍັງທີ່ເຮັດໃຫ້ຍິງສາວຂຽນຊື່ຕົນເອງຕາມດ້ວຍນາມສະກຸນຂອງອີກຄົນຊ້ຳແລ້ວຊ້ຳອີກ?

ແມ່ນຫຍັງທີ່ເຮັດໃຫ້ຊາຍໜຸ່ມແກະສະຫຼັກຕົວໜັງສືໄວ້ໃນຮູບຫົວໃຈເທິງເປືອກໄມ້ ?

## ຕອບ

ເມື່ອຄົນເຮົາຕົກຂຸມຮັກແລ້ວສິ່ງປະຫຼາດຫຼາຍໆຢ່າງກໍເກີດຂຶ້ນການຕົກຂຸມຮັກຄືໜຶ່ງໃນປະສົບການທີ່ອົບອຸ່ນໃຈພາໃຫ້ຫຼົງໄຫຼ ແລະ

ວິເສດທີ່ສຸດໃນຊີວິດຂອງຄົນຄົນໜຶ່ງ. ການຕົກຊຸມຮັກມັນອາດຈະເຈັບປວດແສນສາຫັດຖ້າຄົນທີ່ເຮົາຮັກບໍ່ໄດ້ຮັກເຮົາ. ຢ່າງໃດກໍຕາມ ການຕົກຊຸມຮັກກັບຄົນທີ່ຈະກາຍມາເປັນຄູ່ສົມລົດຕະຫຼອດຊີວິດນັ້ນກໍແມ່ນຄວາມທ້າທາຍທີ່ບໍ່ຄືສິ່ງໃດ.

## ຖາມ

ຄົນເຮົາຊອກຫາຫຍັງເມື່ອເຮົາກຳລັງຫາຄູ່ຊີວິດຄົນນັ້ນ?

## ຕອບ

ເຮົາທຸກຄົນລ້ວນແຕ່ສະແຫວງຫາຄວາມຮັກ ຢ່າງໃດກໍຕາມຄວາມຮັກຂອງແຕ່ລະຄົນລ້ວນແຕກຕ່າງກັນ ບາງເທື່ອເຈົ້າອາດຈະຢຸດຄິດໜ້ອຍໜຶ່ງກັບຄຳວ່າ "ຮັກ" ມັນມີຄວາມໝາຍສຳລັບເຈົ້າແນວໃດ? ຄຳວ່າ "ຮັກ" ອາດເປັນຄຳນາມທີ່ບອກເຖິງຄວາມຮູ້ສຶກຢ່າງໜຶ່ງ ຄຳນີ້ອາດເປັນຄຳກິລິຍາທີ່ບອກເຖິງການກະທຳທີ່ເຮົາເຮັດ. ເຈົ້າຈະນິຍາມຄຳວ່າ "ຮັກ" ແນວໃດ? ສຳລັບເຈົ້າໝາຍຄວາມວ່າແນວໃດ? ຕໍ່ໄປນີ້ ເປັນນິຍາມໜຶ່ງ



**ຄວາມຮັກ** ນັ້ນອົດທົນດົນນານ ແລະ ກະລຸນາ
**ຄວາຮັກ** ບໍ່ອິດສາ
**ຄວາມຮັກ** ບໍ່ອວດຕົວ
**ຄວາຮັກ** ບໍ່ຈອງຫອງ ຫຼື ຫຍາບຄາຍ
**ຄວາມຮັກ** ບໍ່ເຫັນແກ່ຕົວບໍ່ຄຽດງ່າຍ
**ຄວາມຮັກ** ບໍ່ຈົດຈຳຄວາມຜິດຂອງຄົນອື່ນ



# ພາສາຮັກ



## ພາບ

ຄົນທີ່ມັກໃຊ້ພາບຈະເກັບຂໍ້ມູນເປັນພາບໃນຄວາມຄິດເຂົາພົບວ່າການຈື່ຈຳແລະເຂົ້າໃຈສິ່ງທີ່ເຂົາເຫັນນັ້ນງ່າຍກວ່າສິ່ງທີ່ເຂົາໄດ້ຍິນ. ເຂົາອາດຈະໃຊ້ໃນແບບທີ່ວ່າ ເຈົ້າເຫັນບໍວ່າຂ້ອຍໝາຍຄວາມວ່າແນວໃດ ຫຼື ເຮັດໃຫ້ເບິ່ງແດ່ໄດ້ບໍ?

## ສຽງ

ຄົນທີ່ຄິດດ້ວຍສຽງຈະເກັບກຳແລະດຶງຂໍ້ມູນດ້ວຍຄຳທີ່ເປັນກະແຈ. ພວກເຂົາເປັນນັກຟັງທີ່ດີແລະບໍ່ຮູ້ສຶກຢາກທີ່ຈະສະແດງຄວາມຄິດດ້ວຍຄຳເວົ້າ. ພວກເຂົາອາດຈະໃຊ້ບາງຢ່າງ "ເລື່ອງນີ້ຟັງແລ້ວເປັນແນວໃດ" ຫຼື "ບອກຂ້ອຍໄດ້ບໍ?"

## ສໍາຜັດ

ຄົນທີ່ມັກໃຊ້ການສຳຜັດ ມັກຈະເປັນຄົນທີ່ຈົດຈໍ່ກັບການເຄື່ອນໄຫວຄວາມຮູ້ສຶກ ຫຼື ເຂົາມັກຈະໃຊ້ທ່າທາງຫຼາຍຢ່າງ. ເວລາເວົ້າພວກເຂົາອາດຈະໃຊ້ວະລີເຊັ່ນ "ເລື່ອງນີ້ເຈົ້າຮູ້ສຶກແນວໃດ" ຫຼື "ຊ່ວຍສະແດງໃຫ້ຂ້ອຍເຂົ້າໃຈແດ່".

ໃຫ້ເຈົ້າຟັງເຈົ້າເອງລວມທັງຄູ່ແຕ່ງງານຂອງເຈົ້າໃຫ້ດີ ບາງທີເຈົ້າອາດຈະຕ້ອງຮູ້ຮູບແບບພາສາຂອງເຈົ້າເອງກ່ອນແລ້ວ ຈຶ່ງຄ່ອຍຈົດຈໍ່ກັບການຟັງຄູ່ແຕ່ງງານ ເພື່ອສັງເກດຄຳໃດທີ່ເຈົ້າໄດ້ຍິນຫຼາຍທີ່ສຸດແລ້ວທັງນີ້ຈື່ງກໍພ້ອມທີ່ຈະໃຊ້ "ສອງພາສາ".

# ໃຫ້ກຽດ

ຄຳວ່າກຽດ "honor" ໃນພາສາອັງກິດເປັນໄດ້ທັງນາມແລະຄຳກິລິຍາ ເມື່ອໃຊ້ເປັນນາມຄຳນີ້ຈະສື່ສານໃນທຳນອງວ່າ "ຂ້ອຍຮູ້ສຶກເປັນກຽດທີ່ໄດ້ເປັນສ່ວນໜຶ່ງຂອງຄອບຄົວແລະໝູ່ບ້ານ ຂ້ອຍບໍ່ຢາກໃຫ້ຄອບຄົວເສຍກຽດ" ເມື່ອໃຊ້ໃນກິລິຍາໃຫ້ກຽດຈະສື່ສານໃນທຳນອງວ່າ, "ຂ້ອຍໃຫ້ກຽດເຈົ້າເປັນຕົວຂອງເຈົ້າ ເອກະລັກຂອງເຈົ້າມີຄຸນຄ່າສຳລັບຂ້ອຍ ການໃຫ້ກຽດສຳລັບຄູ່ແຕ່ງງານອາດໃກ້ຄຽງກັບການເຄົາລົບຝ່າຍໜຶ່ງ ດັ່ງນັ້ນເຮົາຈະກັບມາສູ່ອົງປະກອບຄຳທີ່ຂຽນໄວ້"

ອົງປະກອບທັງຫ້າປະການນີ້ອາດໃກ້ຄຽງກັບນິຍາມຄຳວ່າ "ຮັກ" ທີ່ຈະນຳໄປປະຕິບັດອົງປະກອບອີກສອງປະການທີ່ຈະຊ່ວຍໃຫ້ຄວາມຫວານຊື່ນຍັງຄົງຢູ່ນຳກັນ ແລະທັກສະການສື່ສານທີ່ມີປະສິດທິພາບການຈັດເວລາຢູ່ຮ່ວມກັນ ອາດຈະບໍ່ເປັນເລື່ອງງ່າຍໃນວັນທີ່ມີວຽກ ຄົນສ່ວນໃຫຍ່ມັກພົບກັບເລື່ອງແບບນີ້ ເຖິງຢ່າງໃດກໍຕາມນີ້ເປັນເລື່ອງສຳຄັນທີ່ຈະເຮັດໃຫ້ຊີວິດການແຕ່ງງານຫວານຊື່ນເຖິງຈະພົບພໍ້ເຫດການໃນຊີວິດປະຈຳວັນ ການຮຽນຮູ້ທັກສະການສື່ສານກໍເປັນສິ່ງໜຶ່ງທີ່ສຳຄັນຍິ່ງທີ່ຈະສ້າງຊີວິດຄູ່ແຕ່ງງານໃຫ້ເຂັ້ມແຂງຢູ່ໃນສະພາບທີ່ດີ ແລະຍັ້ງຢືນຕໍ່ໄປນີ້ເປັນຄຳແນະນຳບາງຢ່າງ.

## ຈຳແນກຮູບແບບພາສາຂອງເຈົ້າ

ຄົນສ່ວນຫຼາຍໃຊ້ຮູບແບບພາສາທັງສາມຢ່າງນີ້ປະສົມກັນຄື:
**ພາບ**, **ສຽງ** ແລະ **ສຳຜັດ**

ເຖິງຢ່າງໃດກໍຕາມຄົນສ່ວນໃຫ່ຍມັກຮູບແບບໃດຮູບແບບໜຶ່ງແລະຄາດຫວັງໃຫ້ຄູ່ແຕ່ງງານຂອງເຮົາໃຊ້ຄຳເວົ້າຫຍັງເພື່ອຈະພົບເຄື່ອງບົ່ງຊີ້ບາງຢ່າງຂອງຮູບແບບພາສາຂອງອີກຝ່າຍໃຫ້ເຮົາມາເບິ່ງແຕ່ລະຮູບແບບ.



**ຄວາມຮັກ** ຊື່ນຊົມຍິນດີໃນຄວາມຈິງ ບໍ່ແມ່ນການກະທຳຊົ່ວ
**ຄວາມຮັກ** ສະໜັບສະໜູນ, ເຮັດດີ, ມີຄວາມຫວັງ
ແລະ ເຊື່ອໃນໃຈສະເໝີ

ແມ່ນແລ້ວເລື່ອງນີ້ເປັນເລື່ອງອຸດົມຄະຕິແຕ່ມັນກໍບອກເປົ້າໝາຍບາງຢ່າງທີ່ຄົນເຮົາຈະມຸ່ງໄປຫາໄດ້ ເປັນໄປໄດ້ບໍວ່າ ການທີ່ຈະເປັນຄົນແບບນີ້ເຮົາອາດດຶງດູດຄົນທີ່ມີລັກສະນະຄ້າຍຄືກັນກໍໄດ້?

ຂໍ້ຄວາມຍົກມານີ້ບາງຄັ້ງໃຊ້ເປັນສ່ວນໜຶ່ງໃນພິທີງານແຕ່ງເມື່ອຄົນສອງຄົນໃຫ້ຄຳສັນຍາຕໍ່ກັນແລະກັນ ຂໍ້ຄວາມນີ້ດັດມາຈາກພຣະຄຳພີຂອງຄຣິດສະຕຽນ ຂໍ້ຄວາມນີ້ພົບໄດ້ໃນສ່ວນທີ່ເອີ້ນວ່າ 1 ໂກລິນໂທ ບົດທີ່ 13 ເຊິ່ງບາງຄັ້ງກໍເອີ້ນວ່າ **"ບົດແຫ່ງຄວາມຮັກ"**

ຄວາມສຳພັນຂອງຜົວກັບເມຍ ແລະຄອບຄົວເປັນຮາກຖານສຳຄັນສຳລັບທຸກຄອບຄົວ. ໃນສັງຄົມທີ່ເຂັ້ມແຂງມີຄວາມສຸກເຊິ່ງສະມາຊິກລ້ວນແຕ່ຈົດຈໍ່ໃນການຕອບສະໜອງຄວາມຕ້ອງການຂອງກັນແລະກັນ ມັນຈະສົ່ງຜົນຕໍ່ເນື່ອງໄປສູ່ຊຸມຊົນທີ່ພວກເຂົາໃຊ້ຊີວິດຢູ່ບ່ອນເຮັດວຽກ ຫຼື ບ່ອນທີ່ກຳລັງສຶກສາ ມີຄົນເຄີຍເວົ້າວ່າ,

"ຫຼັງຈາກການແຕ່ງງານຄວາມຫວານຊື່ນຂອງແສງຈັນແລະດອກກຸຫຼາບກໍກາຍມາສູ່ຄວາມເປັນຈິງຂອງແສງແດດແລະຊາມສົກກະປົກປະກອບກັນຢ່າງໄວວາ".

ບາງຄັ້ງນີ້ກໍເປັນຄວາມຈິງ ແຕ່ກໍເປັນໄປໄດ້ທີ່ຈະຮັກສາຄວາມຫວານຊື່ນໄວ້ ແຕ່ລະນະດຽວກັນ ກໍຮຽນຮູ້ທີ່ຈະປະເຊີນໜ້າກັບຄວາມເປັນຈິງຂອງຊີວິດໃນການສ້າງຊີວິດແຕ່ງງານທີ່ເຂັ້ມແຂງໄດ້ຢູ່ໃນ

ສະພາບທີ່ດີ ແລະ ມີຄວາມສຸກນັ້ນບໍ່ໄດ້ເກີດຂຶ້ນໂດຍບັງເອີນ ຫຼື ດ້ວຍອຸປະຕິເຫດນັ້ນ ມັນກໍເປັນສິ່ງທີ່ພວກເຮົາສ່ວນຫຼາຍປາຖະນາ ແລະຕ້ອງການ ແລະເຮົາຈະເຮັດໃຫ້ມັນເກີດຂຶ້ນໄດ້ແນວໃດ?

ທຳອິດໃຫ້ເຮົາຍອມຮັບວ່າຊີວິດແຕ່ງງານຄືການເປັນຫຸ້ນສ່ວນຊີວິດຂອງຄົນສອງຄົນ ການພັດທະນາຄວາມເປັນຫຸ້ນສ່ວນຊີວິດນີ້ຟັງຄືວ່າມັນງ່າຍແຕ່ເຮັດຍາກ ເຖິງວ່າຜູ້ຍິງແລະຜູ້ຊາຍເກີດຂຶ້ນມາໂດຍແວດລ້ອມດຽວກັນ ໃນຄອບຄົວທີ່ມີຄ່ານິຍົມຄືກັນ ແລະມີໝູ່ກຸ່ມດຽວກັນ ທັງສອງກໍເປັນບຸກຄົນທີ່ມີຄວາມແຕກຕ່າງກັນ ມີບຸກຄະລິກຂະພາບໃນແບບຂອງຕົວເອງ ການພັດທະນາຄວາມເປັນຫຸ້ນສ່ວນຊີວິດແຕ່ງງານທີ່ເຂັ້ມແຂງ ແລະຍັ້ງຢືນຕ້ອງເປັນແບບນີ້.



## ເຄົາລົບ

ຄູ່ແຕ່ງງານທີ່ເຄົາລົບຄວາມຄິດເຫັນ, ຄວາມມັກ ແລະ ຄວາມສາມາດຂອງກັນແລະກັນ ຈະສ້າງຄວາມຜູກພັນລະຫວ່າງກັນລວມທັງຈະເປັນແບບຢ່າງໃຫ້ແກ່ລູກໆໄດ້ເຫັນທັກສະນະຄະຕິ ແລະພຶດຕິກຳແບບນີ້ ການສະແດງຄວາມເຄົາລົບຕໍ່ອີກຝ່າຍຄືການສື່ສານວ່າເຂົາຄົນນັ້ນເປັນບຸກຄົນທີ່ມີຄຸນຄ່າ ແລະສຳຄັນຕໍ່ຄູ່ແຕ່ງງານ, ຄອບຄົວແລະໝູ່ບ້ານ ຄວາມຮູ້ສຶກວ່າຕົນເອງມີຄ່າຈະຊ່ວຍໃຫ້ຄົນເຮົາສາມາດສຳພັນກັບຄົນອື່ນດ້ວຍຄວາມຮັກໄດ້ໃນສະຖານະການຕ່າງໆ ການເຄົາລົບອີກຝ່າຍໜຶ່ງມີຄວາມໝາຍຫຼາຍກວ່າການທົນຢູ່ກັບຄວາມແຕກຕ່າງ.



## ຍອມຮັບ

ການໃຫ້ກຽດກັນເປັນຂັ້ນເລີ່ມຕົ້ນຂອງການຍອມຮັບເອກະລັກທີ່ບໍ່ຄືຄົນອື່ນໃນຕົວບຸກຄົນຜູ້ນັ້ນ ການຍອມຮັບບໍ່ໄດ້ໝາຍຄວາມວ່າເຮົາຕ້ອງຮັບຮອງຫຼືເຫັນດີກັບການກະທຳຫຼືຄວາມເຊື່ອທຸກຢ່າງທີ່ຄົນນັ້ນສະແດງອອກ ການຍອມຮັບໝາຍເຖິງການບອກຄູ່ແຕ່ງງານເຊັ່ນວ່າ, “ຂ້ອຍເຂົ້າ ໃຈວ່າເຈົ້າເຮັດກິດຈະກຳຕ່າງໆໄດ້ດີໃນຕອນເຊົ້າຂະນະທີ່ຂ້ອຍເຮັດວຽກໄດ້ດີໃນຕອນຄ່ຳ ເຮົາໜ້າຈະຫາເວລາທີ່ເໝາະສົມສຳລັບພວກເຮົາຫຼາຍຂຶ້ນ.”

## ຮັບຮອງ

ການບອກຄູ່ແຕ່ງງານຂອງເຈົ້າດ້ວຍຄວາມຮັກວ່າ ເຈົ້າຮູ້ແລະຍອມຮັບວ່າເຂົາແຕກຕ່າງຈາກເຈົ້າ ແລະຮັບຮອງວ່າ ເຂົາມີສິດທີ່ຈະເປັນຢ່າງເຂົາເປັນການຮັບຮອງອີກຝ່າຍໜຶ່ງ ຍັງໝາຍເຖິງການອານຸຍາດໃຫ້ເຂົາເປັນເອກະລັກຢ່າງທີ່ເຂົາເຄີຍເປັນ ແລະກຳລັງຈະເປັນໃນບາງໂອກາດ ການຮັບຮອງເປັນການບອກອີກຝ່າຍວ່າ ເຈົ້າໄວ້ໃຈເຂົາຫຼືພ້ອມທີ່ຈະເປີດເຜີຍຄວາມຈິງໃຈຕໍ່ກັນໃນຄວາມສຳພັນວິທີໜຶ່ງ ທີ່ຈະຮັບຮອງຕໍ່ຄູ່ແຕ່ງງານຂອງເຈົ້າ ກໍຄືໃຫ້ລາວໄດ້ຍິນເຈົ້າເວົ້າກັບຄົນອື່ນເຖິງຄວາມສາມາດພິເສດຂອງລາວ ການຮັບຮອງຈະນຳໄປສູ່ກ້າວຕໍ່ໄປ.

## ສະແດງຄວາມຍິນດີ

ໃຫ້ເຈົ້າຫາວິທີສະແດງຄວາມຍິນດີກັບບຸກຄະລິກກະພາບທີ່ແຕກຕ່າງໃຫ້ນຶກເຖິງວ່າຈະມີຄົນໜຶ່ງທີ່ຈະເປັນຄົນຫງຽບໆ ຂະນະທີ່ອີກຄົນມັກເຂົ້າສັງຄົມ ແຕ່ເຈົ້າທັງສອງຈຶ່ງສະແດງຄວາມຍິນດີໃນຄວາມແຕກຕ່າງການທີ່ເຈົ້າສາມາດສະແດງຄວາມຍິນດີຢ່າງຈິງໃຈຕໍ່ເອກະລັກຂອງຄູ່ຄອງໄດ້ນັ້ນ ເປັນບາດກ້າວສຳຄັນຕໍ່ການໃຫ້ກຽດອີກຝ່າຍໜຶ່ງ.